# ບົດສູນທອນພົດ
# ຂອງທ່ານ ນາງ ປານີ ຢາທໍ່ຕູ້, ກຳມະການກົມການເມືອງສູນກາງພັກ, ປະທານ ສະພາແຫ່ງຊາດ ກ່າວໄຂກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາ ແຫ່ງຊາດ ຊຸດທີ VIII, ວັນທີ 5 ມິຖຸນາ 2019

-----------------------------------

**ຮຽນ:** - ທ່ານ ບຸນຍັງ ວໍລະຈິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ທີ່ເຄົາລົບ ແລະ ນັບຖື ຢ່າງສູງ!

- ບັນດາທ່ານ ຜູ້ນຳ, ອາດີດການນຳຂັ້ນສູງ ຂອງພັກ-ລັດ ທີ່ນັບຖື,
- ບັນດາທ່ານສະມາຊິກສະພາແຫ່ງຊາດ, ແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ.

ມື້ນີ້, ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ໄຂຂຶ້ນຢ່າງເປັນທາງການ. ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ ແລະ ທົ່ວປວງຊົນລາວທັງຊາດ ພວມ ສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ X ເຂົ້າໃນທຸກຂົງເຂດວຽກງານຢ່າງເປັນຂະບວນຟົດຟື້ນ.

ໃນໂອກາດ ທີ່ມີຄວາມໝາຍສຳຄັນດັ່ງກ່າວນີ້, ກອງປະຊຸມມີຄວາມປິຕິຊົມຊື່ນເປັນ ຢ່າງຍິ່ງທີ່ໄດ້ຂໍ່ານັບຮັບຕ້ອນ ທ່ານ ບຸນຍັງ ວໍລະຈິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງສຸດອົກສຸດໃຈ! (ຂໍຊົມເຊີຍ).

ຂໍສະແດງຄວາມຂໍ່ານັບຊົມເຊີຍ ບັນດາທ່ານຜູ້ນຳ, ອາດີດການນຳຂັ້ນສູງ ຂອງພັກ-ລັດ, ບັນດາທ່ານນັກປະຕິວັດອາວຸໂສ, ຜູ້ຊົງຄຸນວຸດທິ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ອາດີດສະມາຊິກສະພາແຫ່ງຊາດ, ຜູ້ຕາງ

ໜ້າອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສະຖາບັນ, ນັກທຸລະກິດ ແລະ ທ່ານຜູ້ຕາງໜ້າພາກສ່ວນຕ່າງໆ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ (ຂໍຊົມເຊີຍ).

**ບັນດາທ່ານ ທີ່ນັບຖື ແລະ ຮັກແພງ**

ໃນໄລຍະ 5 ເດືອນ ຕົ້ນປີ 2019 ຜ່ານມາ, ເຫັນໄດ້ວ່າ, ສະພາບການພາກພື້ນ ແລະ ສາກົນ ຍັງສືບຕໍ່ຜັນແປໄປຢ່າງສະຫຼັບຊັບຊ້ອນ, ເສດຖະກິດໂລກ ມີການຂະຫຍາຍຕົວຊ້າລົງ ແລະ ຍັງບົ່ມຊ້ອນສິ່ງທ້າທາຍຫຼາຍດ້ານ, ເນື່ອງຈາກ ໄດ້ຮັບຜົນກະທົບທາງດ້ານເສດຖະກິດ, ການເມືອງ ລະຫວ່າງບັນດາປະເທດມະຫາອຳນາດ, ອັນໄດ້ສົ່ງຜົນກະ ທົບຕໍ່ບັນດາປະເທດຕ່າງໆໃນໂລກ, ໃນນັ້ນ ລວມມີ ສປປ ລາວ. ສຳລັບ ປະເທດພວກເຮົາ ໃນ 5 ເດືອນຜ່ານມາ, ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະບໍລິຫານງານສູນກາງພັກ, ດ້ວຍຄວາມເອົາໃຈໃສ່ຊີ້ນຳ ແລະ ຊຸກຍູ້ຢ່າງໃກ້ສິດ ຈາກລັດຖະບານ ແລະ ຄວາມບຸກບືນ**ຂອງ**ບັນດາຂະແໜງການ ກໍຄື ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ພວກເຮົາສາມາດຈັດຕັ້ງປະຕິບັດ ບັນດາຄາດໝາຍທາງດ້ານເສດຖະກິດມະຫາພາກ ກໍຄື ບັນດາຕົວຊີ້ວັດໃນຂະແໜງການຕ່າງໆ ທີ່ກຳນົດໄວ້ໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດປະຈຳປີ 2019 ໄດ້ຮັບຜົນສຳເລັດດີພໍສົມຄວນ, ເຮັດໃຫ້ປະເທດຊາດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດ ສືບຕໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກສູງ

ດີຂຶ້ນເປັນກ້າວໆ,ບົດບາດອິດທິພົນຂອງ ສປປ ລາວ ນັບມື້ໄດ້ຮັບການເຊີດຊູຂຶ້ນໃນເວທີພາກພື້ນ ແລະ ສາກົນ.

**ບັນດາທ່ານຜູ້ນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ, ທ່ານແຂກ ທີ່ນັບຖື ແລະ ຮັກແພງ!**

ປີ 2019 ເປັນປີທີ 4 ແຫ່ງການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ກໍຄື ການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຄັ້ງທີ VIII. ສະນັ້ນ, ຮຽກຮ້ອງໃຫ້ທົ່ວພັກ-ລັດ ແລະ ທົ່ວປວງຊົນລາວທັງຊາດ, ທຸກພາກສ່ວນເສດຖະກິດ ຈົ່ງໄດ້ເພີ່ມທະວີຄວາມສາມັກຄີ, ຍົກສູງຄວາມຮັບຜິດຊອບ, ເສີມຂະຫຍາຍຫົວຄິດປະດິດສ້າງ ໃນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ຂອງຕົນ ໃຫ້ມີໝາກຜົນຕົວຈິງ, ຫັນສິ່ງທ້າທາຍເປັນກາລະໂອກາດໃນການສືບຕໍ່ ສູ້ຊົນຈັດຕັ້ງຜັນຂະຫຍາຍບັນດາຄາດໝາຍທີ່ກຳນົດໄວ້ໃນແຜນປີ 2019 ໃຫ້ບັນລຸຜົນສຳເລັດ.

ບົນຈິດໃຈດັ່ງກ່າວ, ກອງປະຊຸມສະໄໝສາມັນເທື່ອທີ 7 ນີ້ຈະສຸມໃສ່ພິຈາລະນາ ແລະ ຮັບຮອງບັນດາເນື້ອໃນທີ່ສຳຄັນດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 4 ເດືອນ, ຄາດຄະເນ 6 ເດືອນຕົ້ນປີ ແລະ ທິດທາງ**ວຽກງານຈຸດສຸມ** ໃນ 6 ເດືອນທ້າຍປີ 2019;

2. ພິຈາລະນາ, ຮັບຮອງບົດລາຍງານຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ກ່ຽວກັບ ການພັດທະນາຊັບພະຍາກອນມະນຸດ ທີ່ຕິດພັນກັບ ການພັດທະນາເສດຖະກິດ-ສັງຄົມໃນໄລຍະ**ໃໝ່** ໂດຍສະເພາະ ການສ້າງ

ຊັບ ພະຍາກອນມະນຸດ ໃຫ້ໄປຕາມຂະແໜງການບຸລິມະສິດ ເປັນຕົ້ນ: ວິຊາການສະເພາະດ້ານ, ໃນສາຂາວິຊາ ກະສິກຳ, ຄູ ແລະ ພະຍາບານ ເພື່ອສາມາດຕອບສະໜອງໃຫ້ແກ່ການພັດ ທະນາປະເທດຊາດ ແລະ ແກ້ໄຂຄວາມທຸກຍາກ**ຂອງປະຊາຊົນ**;

3. ພິຈາລະນາ ບົດລາຍງານຂອງລັດຖະບານ ກ່ຽວກັບ ຜົນການຈັດຕັ້ງປະຕິບັດມະຕິກອງປະ ຊຸມສະພາແຫ່ງຊາດ ສະບັບເລກທີ 081/ສພຊ, ລົງວັນທີ 17 ພະຈິກ 2017 ວ່າດ້ວຍວຽກງານທ່ອງທ່ຽວ ຕິດພັນກັບການຈັດຕັ້ງປະຕິບັດປີທ່ອງທ່ຽວລາວ-ຈີນ ປີ 2019;

4. ພິຈາລະນາ ບົດລາຍງານ ຂອງລັດຖະບານ ກ່ຽວກັບ ຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 080/ສພຊ, ລົງວັນທີ 17 ພະຈິກ 2017 ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

5. ພິຈາລະນາ, ຮັບຮອງການຊີ້ແຈງ ຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບ ການຄຸ້ມຄອງ, ການອອກໃບຕາດິນຊ້ຳຊ້ອນໃນໄລຍະຜ່ານມາ, ມາດຕະການແກ້ໄຂຕໍ່ໜ້າ ແລະ ການຊີ້ແຈງຂອງລັດຖະມົນຕີກະຊວງກະສິກຳ-ປ່າໄມ້ ແລະ ພັດທະນາຊົນນະບົດ ກ່ຽວກັບ ການຟື້ນຟູປ່າໄມ້ ແລະ ປູກປ່າທົດແທນ ຕິດພັນກັບການນຳໃຊ້ງົບ ປະມານ**ຂອງລັດ ກໍຄືຈາກ**ໂຄງການພັດທະນາໄຟຟ້າ-ບໍ່ແຮ່ ແລະ ທຶນຊ່ວຍ ເຫຼືອຈາກຕ່າງປະເທດ;

6. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງສະມາຊິກລັດຖະບານ ຕາມການສະເໜີຂອງທ່ານນາຍົກລັດຖະມົນຕີ;

7. ເລືອກຕັ້ງປະທານສານປະຊາຊົນສູງສຸດ ຕາມການສະເໜີຂອງທ່ານປະທານປະເທດ;

8. ພິຈາລະນາ, ຮັບຮອງ ບົດລາຍງານຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບ ການຕິດຕາມກວດກາ ການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນຕາມມາດຕາ 42 ຂໍ້ 2, ຂໍ້ 5 ແລະ ຂໍ້ 6 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ;

9. ພິຈາລະນາບົດລາຍງານ ການເຄື່ອນໄຫວ**ວຽກງານ**ຂອງຄະນະປະຈໍາສະພາແຫ່ງຊາດ ໄລຍະ 5 ເດືອນ ຕົ້ນປີ ແລະ ທິດທາງຈຸດສຸມ 6 ເດືອນທ້າຍປີ 2019;

10. ພິຈາລະນາ ແລະ ຮັບຮອງ ການສ້າງ ແລະ ປັບປຸງຮ່າງກົດໝາຍ ຈໍານວນ 10 ສະບັບ ໃນນີ້:

(1) ຂົງເຂດເສດຖະກິດມີ 6 ສະບັບ ຄື: ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍ ອາກອນລາຍໄດ້, ກົດໝາຍວ່າດ້ວຍອາກອນຊົມໃຊ້, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການຕອບໂຕ້ການທຸ້ມຕະຫຼາດ ແລະ ການອຸດໜູນສິນຄ້ານໍາເຂົ້າ ແລະ ກົດໝາຍວ່າດ້ວຍປ່າໄມ້;

(2) ຂົງເຂດວັດທະນະທໍາ-ສັງຄົມ ມີ 2 ສະບັບ ຄື: ກົດໝາຍວ່າດ້ວຍອາຊີວະສຶກສາ ແລະ ກົດໝາຍວ່າດ້ວຍການຄຸ້ມຄອງໄພພິບັດ;

(3) ຂົງເຂດຍຸຕິທໍາ ແລະ ການປົກຄອງ ມີ 2 ສະບັບ ຄື: ກົດໝາຍວ່າດ້ວຍຄ່າທໍານຽມສານ ແລະ ກົດໝາຍວ່າດ້ວຍເອກະສານ.

**ບັນດາທ່ານທີ່ນັບຖື ແລະ ຮັກແພງ!**

ເພື່ອຮັບປະກັນການດໍາເນີນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ບັນລຸ**ຕາມ**ຄາດໝາຍທີ່ວາງໄວ້, ຕາງໜ້າຄະນະປະຈໍາສະພາແຫ່ງຊາດ, ໃນນາມປະທານກອງປະຊຸມ ຮຽກຮ້ອງມາ

ຍັງທຸກພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມື ຕໍ່ບັນດາເນື້ອໃນທີ່ຈະນໍາເຂົ້າພິຈາລະນາໃນ**ກອງປະຊຸມ**ເທື່ອນີ້, ຮຽກຮ້ອງມາຍັງສະມາຊິກສະພາແຫ່ງຊາດ ຈົ່ງເຊີດຊູຄວາມຮັບຜິດຊອບການເມືອງ, ໃນການຄົ້ນຄວ້າ, ປະກອບຄໍາເຫັນ, ພິຈາລະນາຕໍ່ທຸກບັນຫາ ຢ່າງຖີ່ຖ້ວນ, ພາວະວິໄສ ບົນພື້ນຖານແນວທາງນະໂຍບາຍຂອງພັກ, ກົດໝາຍ, ສະພາວະຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງຊາດ ເຮັດໃຫ້ເນື້ອໃນທີ່ນໍາມາພິຈາລະນາ, ຮັບຮອງຄັ້ງນີ້ມີຄຸນນະພາບ **ແລະ ສາມາດນໍາໄປຈັດຕັ້ງປະຕິບັດຢ່າງມີຜົນສັກສິດ.**

ນະໂອກາດນີ້, ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ປະກາດໄຂກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

**(ຂໍຂອບໃຈ)**